ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

---------===000===------

<u>ອົງການອະທິໄອຍະການ</u>

<u>ປະຊາຊົນ ແຫ່ງ ສປປລ</u>

ເລກທີ 06 /ອອປ.

## ຄຳສັ່ງແນະນຳ

## ຂອງອະທິໄອຍະການປະຊາຊົນ

## ວ່າດ້ວຍການຮັກສາຂອງກາງຄະດີອາຍາ

-----------

ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ອີງຕາມ ການປຶກສາຫາລືວຽກງານ ລະຫວ່າງອົງການອະທິໄອຍະການປະຊາຊົນ, ສານປະຊາຊົນສູງສຸດ ແລະກະຊວງພາຍໃນຄັ້ງວັນທີ 19 ພະຈິກ 1998.

ເພື່ອຮັບປະກັນ ການດຳເນີນຄະດີໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕິດຕາມການກ່າວຫາຂອງຄູ່ຄວາມໃນຄະດີ ຕໍ່ການກະທຳຂອງພະນັກງານປົກປ້ອງກົດໝາຍ ແລະເພື່ອປົກປັກຮັກສາຂອງກາງຄະດີບໍ່ໃຫ້ຖືກເຮ່ຍເສຍຫາຍ.

ດັ່ງນັ້ນ, ອະທິໄອຍະການປະຊາຊົນ ຈຶ່ງໄດ້ອອກຄຳສັ່ງແນະນຳເຖິງອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເຂດພິເສດ, ເມືອງ ແລະອົງການໄອຍະການທະຫານຂັ້ນສູງ ດັ່ງນີ້:

1. ເມື່ອໄດ້ຮັບສຳນວນຄະດີອາຍາຈາກເຈົ້າໜ້າທີ່ແລ້ວ ໃຫ້ກວດກາເບິ່ງວ່າຄະດີດັ່ງກ່າວມີຂອງກາງຄະດີ ຫຼືບໍ່.

ໃນກໍລະນີ ສຳນວນຄະດີມີຂອງກາງຄະດີ ກໍຕ້ອງໄດ້ກວດກາບັນຊີຂອງກາງຄະດີດັ່ງກ່າວຊ້ອງໜ້າເຈົ້າໜ້າທີ່ຜູ້ມອບ ຫຼື ໃຫ້ຖືກຕ້ອງຮອບດ້ານ, ນັບທັງປະເພດ, ຈຳນວນ ແລະຄຸນນະພາບຢ່າງຄົບຖ້ວນ.

2. ການຮັບຂອງກາງຈາກເຈົ້າໜ້າທີ່ ຫຼືການສົ່ງມອບຂອງກາງຄະດີ ພ້ອມທັງສຳນວນຄະດີໃຫ້ແກ່ສານນັ້ນ ຕ້ອງເຮັດບົດບັນທຶກຮັບ ຫຼື ມອບຂອງກາງ ເຊິ່ງບົ່ງບອກເຖິງປະເພດ, ຮູບປະພັນ, ຈຳນວນ, ນ້ຳໜັກ, ຄຸນນະພາບ, ເຄື່ອງໝາຍ, ລາຄາ ແລະອື່ນໆຢ່າງຄົບຖ້ວນຕາມທີ່ກົດໝາຍໄດ້ກຳນົດໄວ້.

ບົດບັນທຶກຮັບ ຫຼືມອບຂອງກາງຄະດີ ຕ້ອງອ່ານຊ້ອງໜ້າ ແລະພ້ອມການລົງລາຍເຊັນໄວ້ເປັນຫຼັກຖານ.

ບົດບັນທຶກຮັບ ຫຼືມອບຂອງກາງຄະດີ ຕ້ອງເຮັດເປັນ 3 ສະບັບ, ໜຶ່ງສະບັບຮັກສາໄວ້ສຳເນົາ, ໜຶ່ງສະບັບເອົາໄວ້ໃນສຳນວນຄະດີ ແລະອີກໜຶ່ງສະບັບມອບໃຫ້ຜູ້ມາມອບ ຫຼື ຜູ້ຮັບຂອງກາງຄະດີ.

3. ຂອງກາງຄະດີເຊິ່ງແມ່ນພັນທະບັດພາຍໃນ ຫຼື ຕ່າງປະເທດ ຫຼື ເງິນກີບທະນາຄານ ຫຼື ເງິນເຕາຕ່າງປະເທດ ຫຼື ວັດຖຸທີ່ມີຄ່ານັ້ນ ຕ້ອງເອົາໄປຝາກໄວ້ນຳທະນາຄານຂອງລັດ.

ຂອງກາງ ເຊິ່ງແມ່ນອາວຸດ ຫຼືວັດຖຸລະເບີດນັ້ນ ຕ້ອງເອົາໄປຝາກໄວ້ນຳກອງບັນຊາການທະຫານ ຫຼື ປ ກ ສ ບ່ອນທີ່ມີເງື່ອນໄຂຮັບປະກັນໃນການປົກປັກຮັກສາ.

ຂອງກາງ ເຊິ່ງແມ່ນທາດເຄມີທີ່ເປັນອັນຕະລາຍ ຫຼື ທາດເບື່ອ ແລະຢາປິ່ນປົວພະຍາດຕ່າງໆນັ້ນ ຕ້ອງເອົາໄປຝາກໄວ້ນຳພະແນກສາທາລະນະສຸກ.

ຂອງກາງ ຊຶ່ງແມ່ນວັດຖຸເນົ່າເປື່ອຍສາມາດເຊື່ອມຄຸນນະພາບໄວນັ້ນ ຕ້ອງເຊີນເອົາເຈົ້າໜ້າທີ່ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ມາທໍາການປະມູນຕີລາຄາ ແລ້ວຂາຍໂດຍຊ້ອງໜ້າເຈົ້າຂອງວັດຖຸສິ່ງຂອງດັ່ງກ່າວ ແລ້ວນໍາເອົາເງິນໄປຝາກໄວ້ຢູ່ນໍາທະນາຄານຂອງລັດ.

ຂອງກາງ ຊຶ່ງແມ່ນວັດຖຸສິ່ງຂອງເຊັ່ນ: ພາຫະນະຕ່າງໆນັ້ນ ຕ້ອງເອົາໄປຝາກໄວ້ຢູ່ ປກສ ຫຼື ບ່ອນມີສະຖານທີ່ເກັບມ້ຽນສະເພາະ.

ການຝາກ, ການຕີລາຄາປະມູນ ຫຼື ການຂາຍ ຂອງກາງນັ້ນ ຕ້ອງໄດ້ເຮັດບົດບັນທຶກຕາມຂໍ້ 2 ເທິງນີ້.

4. ການສໍ້ໂກງ, ການຍັກຍອກ ຫຼືການສວຍໃຊ້ຂອງກາງເພື່ອຜົນປະໂຫຍດສ່ວນຕົວ ຫຼືການເຮັດໃຫ້ຂອງກາງເກີດເຮ່ຍເສຍຫາຍ, ຖືກເປ່ເພ ຫຼືອື່ນໆ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະມີຄວາມຮັບຜິດຊອບຕໍ່ກົດໝາຍຕາມຄວາມເໝາະສົມ.

5. ຂອງກາງຄະດີຕ້ອງສົ່ງມອບໃຫ້ແກ່ສານ ພ້ອມກັບສໍານວນຄະດີອາຍາທຸກຄັ້ງ ໂດຍເຮັດບົດບັນທຶກມອບຂອງກາງຄະດີ ຕາມຂໍ້ 2 ເທິງນີ້.

6 ໃຫ້ອົງການໄອຍະການປະຊາຊົນ ແລະອົງການໄອຍະການທະຫານ ແຕ່ລະຂັ້ນຈັດຕັ້ງປະຕິບັດຄໍາສັ່ງແນະນໍາສະບັບນີ້ຢ່າງເຂັ້ມງວດ. ຖ້າພົບຂໍ້ຫຍຸ້ງຍາກປະການໃດ ໃຫ້ລາຍງານຂໍຄໍາເຫັນຈາກອະທິໄອຍະການປະຊາຊົນ.

ວຽງຈັນ, ວັນທີ 23/12/1998

ອະທິໄອຍະການປະຊາຊົນ.

ຄໍາປານ ພິລາວົງ